# ຂັ້ນຕອນການສະໝັກ

## *ນີ້ແມ່ນວິທີການທີ່ທ່ານຈະເລີ້ມຕົ້ນແນວໃດ*

- ໃຫ້ໂທຣມາທີ່ໝາຍເລກ 1-800-621-FEMA (3362) ເພື່ອເອົາໝາຍເລກສະໝັກໂດຍບໍ່ເສຍຄ່າໂທຣຫຼືລົງທະບຽນ ໂດຍທາງສູນກາງໃຫ້ການຊ່ວຍເຫຼືອສ່ວນບຸກຄົນໂດຍທາງອອນລາຍນ໌. ໂດຍການເຂົ້າເບິ່ງຂໍ້ມູນໄດ້ທີ່ເວັບໄຊຕ໌ www.fema.gov. ສິ່ງເຫຼົ່ານີ້**ເທົ່ານັ້ນ**ທີ່ເປັນວິທີການ ສະໝັກເອົາຄວາມຊ່ວຍເຫຼືອ.

## *ມີຫຍັງແດ່ຈະເກີດຂຶ້ນໃນນະທີ່ນີ້*

- ທ່ານຈະໄດ້ຖືກສອບຖາມເພື່ອໃຫ້ຂໍ້ມູນທົ່ວໄປຂອງທ່ານກ່ຽວກັບລາຍໄດ້, ການປະກັນໄພແລະຄວາມເສຍຫາຍຂອງທີ່ພັກເຊົ່າແລະສິ່ງທີ່ທ່ານຈຳເປັນສຳລັບບ້ານເຮືອນຂອງທ່ານ.
- ທ່ານຈະໄດ້ຮັບ**ໝາຍເລກສະໝັກ,** ເຊິ່ງຈະຊ່ວຍໃຫ້ທ່ານສາ ມາດຄົ້ນຫາເອກະສານຂໍ້ມູນຂອງທ່ານໃນລະບົບການເກັບຂໍ້ມູນ, ຂໍໃຫ້ທ່ານຈົດໝາຍເລກດັ່ງກ່າວໄວ້, ເຊິ່ງທ່ານຈະຕ້ອງເກັບຮັກສາໄວ້ໃນທີ່ປອດໄພແລະນຳເອົາມາໃຊ້ໃນອານາຄົດ.

## *ໃນເວລາສອງສາມວັນຕໍ່ມາ*

- ພະນັກງານສຳຫຼວດກວດກາຂອງ FEMA ຈະຕິດຕໍ່ມາຫາທ່ານເພື່ອກະກຽມການຢ້ຽມຢາມບ້ານເຮືອນຫຼືທີ່ພັກຂອງທ່ານໄດ້ຮັບຄວາມເສຍຫາຍ.
- ພະນັກງານສຳຫຼວດກວດກາຂອງ FEMA ຈະມາເບິ່ງບັນດາຄວາມເສຍຫາຍທີ່ເກີດມາຈາກໄພພິບັດສຳລັບໂຄງການບຸກ ຄົນແລະຄົວເຮືອນຂອງ FEMA.
- ທ່ານຈະໄດ້ຖືກຮ້ອງຂໍໃຫ້ເຊັນເອກະສານທີ່ລະບຸໄວ້ວ່າທ່ານຫຼືໃຜຜູ້ນຶ່ງໃນຄົວເຮືອນທ່ານເປັນພົນລະເມືອງຂອງສະຫະລັດອາເມຣິກາ, ພົນລະເມືອງທີ່ບໍ່ຖືສັນຊາດອາເມຣິກາ ຫຼືຄົນຕ່າງດ້າວທີ່ມີສິດໃນເວລາຂອງການເກີດໄພພິບັດ. ທ່ານຈະຕ້ອງສະແດງເອກະສານປະຈຳຕົວຂອງທ່ານ.

## *ໃນເວລາຕໍ່ມາ*

- ຖ້າຫາກທ່ານມີຄວາມເໝາະສົມສຳລັບໂຄງການບຸກຄົນແລະຄົວເຮືອນຂອງ FEMA, ທ່ານຈະໄດ້ຮັບເຊັກເງິນໂດຍທາງໄປສະນີ ຫຼືໄດ້ຮັບໂດຍການຝາກເຂົ້າທະນາຄານໂດຍກົງ ພ້ອມດ້ວຍຈົດໝາຍສະບັບນຶ່ງອີກຕ່າງຫາກ, ຢູ່ໃນຈົດໝາຍນີ້ຈະໄດ້ອະທິບາຍໃຫ້ທ່ານຊາບວ່າທ່ານຈະໃຊ້ການໃຫ້ຄວາມຊ່ວຍເຫຼືອແນວໃດ. ທ່ານອາດຈະໄດ້ຮັບກອງທຶນການຊ່ວຍເຫຼືອເພີ້ມເຕີມຈາກໂຄງການອື່ນໆໃນເວລາຕໍ່ມາ.

## *ຄວາມຊ່ວຍເຫຼືອນີ້:*

- ບັນດາກອງທຶນເຫຼົ່ານີ້ອາດຈະຖືກນຳມາໃຊ້ສຳລັບການໃຫ້ຄວາມຊ່ວຍເຫຼືອໃນການເຊົ່າທີ່ພັກອາໃສ, ຖ້າຫາກວ່າບ້ານເຮືອນຫຼືທີ່ພັກຂອງທ່ານບໍ່ສາມາດເຂົ້າໄປຢູ່ອາໃສໄດ້ອັນເນື່ອງມາຈາກໄພພິບັດ.
- ທ່ານອາດຈະໃຊ້ກອງທຶນຂອງ FEMA ວ່າດ້ວຍການສ້ອມແປງເຮືອນທີ່ພັກອາໃສ ເພື່ອການສ້ອມແປງທີ່ມີປະສິດທິພາບເພື່ອເຮັດໃຫ້ທີ່ພັກອາໃສຂອງທ່ານປອດໄພ, ສະອາດແລະໃຊ້ການໄດ້ດີ. ບັນດາກອງທຶນເຫຼົ່ານີ້ແມ່ນມີໄວ້ເພື່ອການສ້ອມແປງສິ່ງທີ່ຈຳເປັນເພື່ອເຮັດໃຫ້ບັນດາຫ້ອງທີ່ພັກອາໃສທີ່ສຳຄັນສາມາດເຂົ້າຢູ່ອາໃສໄດ້.
- ທ່ານອາດໃຊ້ກອງທຶນຊັບສິນສ່ວນບຸກຄົນສຳລັບການສ້ອມແປງ ທີ່ມີປະສິດທິພາບຫຼືເພື່ອຫາເຄື່ອງເຮືອນແລະອຸປະກອນຕ່າງໆມາແທນອັນເກົ່າ.

# ຂັ້ນຕອນຂອງ SBA ແລະ FEMA

ອົງການບໍລິຫານທຸລະກິດຂະໜາດນ້ອຍແຫ່ງສະຫະລັດອາເມຣິກາ ຫຼື (SBA) ອາດຈະສົ່ງລາຍການໃຫ້ກູ້ຢືມຫຼັງຈາກທ່ານໄດ້ທຳການສະໝັກເອົາຄວາມຊ່ວຍເຫຼືອທີ່ໂທລະສັບໝາຍເລກ 1-800-621- FEMA (3362) ຫຼືຕິດຕໍ່ມາທີ່ www.fema.gov. ເປັນສິ່ງທີ່ສຳຄັນທີ່ສຸດທີ່ທ່ານຈະຕ້ອງປະກອບຟອມຕ່າງໆໃນລາຍການທີ່ໄດ້ສົ່ງມາໃຫ້ນີ້ ແລະສົ່ງຄືນໃຫ້ທາງ SBA ໄວເທົ່າທີ່ທ່ານຈະສາມາດເຮັດໄດ້.

- ຖ້າຫາກທ່ານບໍ່ປະກອບເອກະສານນີ້ແລ້ວສົ່ງແບບຟອມ SBA ຄືນ, ທ່ານອາດຈະບໍ່ມີຄວາມເໝາະສົມເພື່ອຮູບແບບຂອງການຊ່ວຍເຫຼືອອື່ນໆ.

## *ການຊ່ວຍເຫຼືອແບບຕົວຕໍ່ຕົວ*

- ທ່ານສາມາດທີ່ຈະຮັບເອົາການຊ່ວບເຫຼືອແບບຕົວຕໍ່ຕົວໂດຍການປະກອບເອກະສານລາຍການກູ້ຢືມໄດ້ທີ່ສູນການຟື້ນຟູຈາກໄພພິບັດແຫ່ງໃດກໍ່ໄດ້. ເພື່ອທີ່ຈະຕິດຕໍ່ສູນທີ່ໃກ້ທີ່ສຸດ, ໃຫ້ໂທຣຕິດຕໍ່ໄປທີ່ໂທລະສັບສາຍດ່ວນການຊ່ວຍເຫຼືອຈາກໄພພິບັດຂອງ SBA ໄດ້ທີ່ໝາຍເລກ 1-800-659-2955 ໂດຍບໍ່ເສຍຄ່າໃຊ້ຈ່າຍ.
- ການໃຫ້ກູ້ຢືມຈາກ SBA ດ້ວຍຄ່າດອກເບ້ຍຕ່ຳແມ່ນມີໃຫ້ ສຳລັບບັນດາຜູ້ທີ່ເຊົ່າ ສະຖານ ທີ່ຕ່າງໆ, ເຈົ້າຂອງເຮືອນຢູ່ ອາໃສ, ເຈົ້າຂອງກິດຈະການແລະບັນດາອົງການຕ່າງໆ ທີ່ບໍ່ຫວັງຜົນກຳໄລທີ່ກຳລັງປະສົບຄວາມເດືອດຮ້ອນຈາກການ ສູນເສຍ ອັນເນື່ອງມາຈາກໄພພິບັດຄັ້ງນີ້.

## *ຂອບເຂດຈຳກັດຂອງການໃຫ້ກູ້ຢືມ*

- ບັນດາເຈົ້າຂອງເຮືອນອາດມີຄວາມສາມາດຢືມໄດ້ເຖິງ 200,000ໂດລາ ສຳລັບການສ້ອມແປງບັນດາອະສັງຫາລິມ ຊັບ.
- ຜູ້ເຊົ່າແລະເຈົ້າຂອງບ້ານທັງຫຼາຍອາດມີຄວາມສາມາດຢືມເງິນໄດ້ເຖິງ 40,000 ໂດລາ ເພື່ອການທົດແທນສຳລັບຊັບສິນສ່ວນບຸກຄົນທີ່ໄດ້ຮັບຄວາມເສຍຫາຍຈາກໄພພິບັດ.
- ຝ່າຍທຸລະກິດອາດສາມາດສະໝັກໄດ້ເຖິງ 1.5 ລ້ານ ໂດລາ ສຳລັບຄວາມເສຍຫາຍທີ່ບໍ່ສາມາດຊົດໃຊ້ໄດ້ດ້ວຍການປະກັນໄພ.
- ການກູ້ຢືມໂດຍ SBA ໄດ້ຈັດຂຶ້ນເພື່ອການສ້ອມແປງຫຼືການທົດແທນຂອງອະສັງຫາລິມຊັບ ຫຼືຊັບສິນສ່ວນບຸກຄົນ. ທ່ານອາດ ສາມາດ ເພີ້ມການກູ້ຢືມຂຶ້ນເຖິງ 20 % ເພື່ອໃຊ້ຈ່າຍໃນ ການປັບປຸງການປ້ອງກັນ.

ມີການຊ່ວຍເຫຼືອຂອງ FEMA ແບບໃດແດ່ທີ່ ໄດ້ຈັດໃຫ້?

### ***ການຊ່ວຍເຫຼືອດ້ານທີ່ພັກອາໃສ***

ຈຳນວນເງິນສຳລັບບຸກຄົນເພື່ອເຊົ່າສະຖານທີ່ພັກເຊົ່າຕ່າງໆເພື່ອດຳລົງຊີວິດ/ ຫຼືທີ່ພັກຊົ່ວຄາວໃນກໍລະນີບໍ່ສາມາດຫາ ເຊົ່າໄດ້)

### ***ການສ້ອມແປງ***

ຈຳນວນເງິນສຳລັບເຈົ້າຂອງເຮືອນເພື່ອສ້ອມແປງຄວາມເສຍຫາຍຈາກໄພພິບັດທີ່ບໍ່ສາມາດຈ່າຍໄດ້ໂດຍການປະກັນໄພ. ເປົ້າໝາຍແມ່ນເຮັດໃຫ້ບ້ານເຮືອນທີ່ເສຍຫາມີຄວາມປອດໄພ, ມີສຸຂະອານາໄມແລະໃຊ້ການໄດ້.

### ***ການທົດແທນ***

ງົບປະມານທີ່ຈຳກັດອາດມີຢູ່ພາຍໃຕ້ເງື່ອນໄຂທີ່ບໍ່ເປັນປະຈຳເພື່ອທົດແທນບ້ານເຮືອນທີ່ຖືກທຳລາຍໂດຍໄພພິບັດ. ຄວາມຕ້ອງການໃນການຊ່ວຍເຫຼືອອື່ນໆ

### ***ຄວາມຕ້ອງການໃນການຊ່ວຍເຫຼືອອື່ນໆ***

ຈຳນວນເງິນສຳລັບຄວາມຕ້ອງການທີ່ຈຳເປັນແລະສຳຄັນອັນເນື່ອງມາຈາກໄພພິບັດ, ບໍ່ສາມາດຈ່າຍໄດ້ໂດຍການປະກັນແລະການຊ່ວຍເຫຼືອອື່ນໆ. ອັນນີ້ຈະລວມທັງລາຍຈ່າຍທາງການແພດ, ຄ່າທັນຕະແພດ, ຄ່າປົງສົບ, ຊັບສິນສ່ວນບຸກຄົນ, ຄ່າໂດຍສານຂົນສົ່ງແລະຄ່າໃຊ້ຈ່າຍອື່ນໆທີ່ທາງ FEMA ອະນຸມັດ. ທ່ານອາດມີຄວາມຕ້ອງການທີ່ຈະສະໝັກເອົາການກູ້ຢືມດອກເບ້ຍຕ່ຳຂອງ SBA ກ່ອນທີ່ຈະຮັບເອົາການຊ່ວຍເຫຼືອບາງຢ່າງ.

### ***ຂໍ້ມູນຂອງ FEMA***

ຫຼັງຈາກທີ່ທ່ານໄດ້ສະໝັກເອົາການຊ່ວຍເຫຼືອ, ລະບົບການບໍລິການຂໍ້ມູນແລະການສະໝັກເລື້ອງໄພພິບັດຂອງ FEMA ຖືວ່າເປັນແຫຼ່ງຂໍ້ມູນທີ່ສຳຄັນທີ່ສຸດ. ທ່ານອາດຈະຖາມເຖິງລາຍການປະກັນໄພ, ສະຖານະພາບຂອງການສະໝັກຂອງທ່ານ, ຫຼືຢາກຮູ້ວ່າເງິນທີ່ໄດ້ມາຈາກໂຄງການຊ່ວຍເຫຼືອຕ່າງໆໄດ້ມີການນຳໃຊ້ແນວໃດ. ການຊ່ວຍເຫຼືອຂອງ FEMA ຈະບໍ່ຊ່ວຍເຫຼືອທ່ານທັງແຕ່ຈະໃຫ້ການຊ່ວຍເຫຼືອທ່ານໃນການຟື້ນຟູ.

ການຊ່ວຍເຫຼືອໃນດ້ານໄພພິບັດຂອງລັດຖະບານຈະລວມເອົາຄວາມຕ້ອງການຂັ້ນພື້ນຖານເທົ່ານັ້ນແລະຈະບໍ່ທົດແທນໃຫ້ແກ່ທ່ານສຳລັບການສູນເສບຂອງທ່ານເໝືອນຕາມປົກະຕິ. ຖ້າທ່ານມີປະກັນໄພ, ການຊ່ວຍເຫຼືອຂອງລັດຖະບານອາດຊ່ວຍໃນການຈ່າຍສຳລັບຄວາມຕ້ອງການຂັ້ນພື້ນຖານທີ່ບໍ່ກວມຢູ່ພາຍໃຕ້ນະໂຍບາຍການປະກັນຂອງທ່ານ. ບັນດາຜູ້ຢູ່ອາໃສຕ້ອງຕິດຕໍ່ຫາບັນດາເຈົ້າໜ້າທີ່ປະກັນໄພຂອງເຂົາເອງກ່ອນ, ຫຼັງຈາກນັ້ນຖ້າວ່າເຂົາເຂົ້າມີຄວາມຕ້ອງການບໍ່ສອດຄ່ອງ, ພວກເຂົາເຈົ້າຕ້ອງໂທຣຕິດຕໍ່ຫາ FEMA ເພື່ອທຳການສະໝັກ. ບາງການຊ່ວຍເຫຼືອໃນດ້ານໄພພິບັດອາດຈະບໍ່ຕ້ອງຈ່າຍຄືນ, ໂດຍທີ່ຄວາມຊ່ວຍເຫຼືອປະເພດອື່ນໆອາດຈະມາຈາກຮູບແບບຂອງການກູ້ຢືມ. ຕົວແທນຂອງ FEMA ຈະອະທິບາຍລາຍລະອຽດໃຫ້ແກ່ທ່ານໃນເວລາທີ່ທ່ານໂທຣໄປ. ທ່ານສາມາດທົບທວນຄວາມຮຽກຮ້ອງຂອງທ່ານໄດ້ແບບອ໊ອນລາຍນ໌ ທີ່ສູນການໃຫ້ຄວາມຊ່ວຍເຫຼືອຕໍ່ບຸກຄົນທີ່ເວັບໄຊຕ໌ www.fema.gov .

**ສຳລັບຂໍ້ມູນເພີ້ມເຕີມຫຼືເພື່ອຢາກກວດສອບການສະໝັກເອົາການຊ່ວຍເຫຼືອດ້ານໄພພິບັດ, ຕິດຕໍ່ມາທີ່ໝາຍເລກ**

**1-800-621-FEMA (3362)**

TTY: 1-800-462-7585

**ຫຼື ສູນໃຫ້ຄວາມຊ່ວຍເຫຼືອສ່ວນບຸກຄົນໂດຍທາງອອນລາຍນ໌**

**www.fema.gov**

ການໃຫ້ຄວາມຊ່ວຍເຫຼືອໃນການຟື້ນຟູໃນກໍລະນີການປະສົບໄພພິບັດແມ່ນມີໃຫ້ທຸກຄົນ ໂດຍປາສະຈາກການແບ່ງແຍກຜິວ, ເພດ, ສາສນາ, ຊາດຕົ້ນກຳເນີດ, ອາຍຸ, ສະຖານະພາບທີ່ເສຍອົງຄະ, ສະຖານະພາບທາງດ້ານເສດຖະກິດຫຼືຄວາມຄຽດແຄ້ນຕ່າງໆ. ຖ້າທ່ານຮູ້ວ່າທ່ານໄດ້ຖືກປະຕິບັດດ້ວຍວິທີ່ການຈຳແນກຫຼືແບ່ງແຍກຂໍໃຫ້ທ່ານຈົ່ງຕິດຕໍ່ FEMA ມາທີ່ເບີໂທຣ 800-621- FEMA (3362) ຫຼືຕິດຕໍ່ສຳນັກງານວ່າດ້ວຍສິດທິສະເໝີພາບແຫ່ງລັດ. ຖ້າຫາກມີຂໍ້ສົງໃສທີ່ກ່ຽວຂ້ອງກັບການລ່ວງລະເມີດຕໍ່ໂປຣແກຣມ FEMA, ຂໍໃຫ້ຕິດຕໍ່ສາຍດ່ວນທາງໂທລະສັບກ່ຽວກັບການສໍ້ໂກງໂດຍໂທຣມາທີ່ໝ!ຍເລກ 1-800-323-8603.

# ຄູ່ມືຂອງໂຄງການຊ່ວຍເຫຼືອໃນກໍລະນີໄພພິບັດ